ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຍທຂ PWT

ກະຊວງໂຍທາທິການ ແລະ ຂົນສົ່ງ

ຫ້ອງການກະຊວງ

ຄະນະກຳມະການປະມູນຈັດຊື້-ຈັດຈ້າງ

ເລກທີ 01836 /ຍທຂ.ຫກ

ນະຄອນຫຼວງວຽງຈັນ, ວັນທີ 25 JAN 2022

# ຫນັງສືເຊີນເຂົ້າຮ່ວມການປະມູນ

- ອີງຕາມຂໍ້ຕົກລົງ ຂອງລັດຖະມົນຕີກະຊວງ ໂຍທາທິການ ແລະ ຂົນສົ່ງ ສະບັບເລກທີ: 00088/ຍທຂ, ລົງວັນທີ 05 ມັງກອນ 2022 ວ່າດ້ວຍການແຕ່ງຕັ້ງຄະນະຈັດຊື້ອຸປະກອນຮັບໃຊ້ລະບົບຫ້ອງປະຊຸມທາງໄກ ແລະ ເຄືອຄ່າຍອິນເຕີເນັດ ຂອງຂະແໜງໂຍທາທິການ ແລະ ຂົນສົ່ງ.

ຫ້ອງການກະຊວງ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຖືເປັນກຽດ ເຊີນທ່ານເຂົ້າຮ່ວມການປະມູນ ຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ລະບົບຫ້ອງປະຊຸມທາງໄກ (Video Conference) ດັ່ງມີລາຍລະອຽດລຸ່ມນີ້:

1. ຫ້ອງການກະຊວງ, ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຮັບອະນຸມັດງົບປະມານປະຈຳສົກປີ 2022 ເພື່ອດຳເນີນການ ຈັດຊື້-ຈັດຈ້າງ ອຸປະກອນຮັບໃຊ້ລະບົບຫ້ອງປະຊຸມທາງໄກ (Video Conference) ລາຍລະອຽດໄດ້ລະບຸໄວ້ໃນເອກະສານຄຳແນະນຳການປະມູນ;
2. ກຳນົດໄລຍະເວລາ ໃນການສົ່ງມອບສິນຄ້າ ແມ່ນ 15 ມື້ ນັບແຕ່ມື້ເຊັນສັນຍາເປັນຕົ້ນໄປ;
3. ຮູບແບບການຈັດຊື້ ແມ່ນຈະໄດ້ດຳເນີນການປະມູນດ້ວຍຮູບແບບການປະມູນເປີດກວ້າງ ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍ ການຈັດຊື້–ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ການຈັດຊື້–ຈັດຈ້າງ ດ້ວຍທຶນຂອງລັດ ຂອງກະຊວງການເງິນ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາມີນາ 2019;
4. ບໍລິສັດໃດທີ່ຕ້ອງການຊື້ເອກະສານປະມູນຄົບຊຸດຈະຕ້ອງຍື່ນໜັງສືສະເໜີຫາຄະນະກຳມະການປະມູນຕາມທີ່ຢູ່ຂ້າງລຸ່ມ ເລີ່ມແຕ່ວັນທີ 25 ມັງກອນ 2022, ໃນລາຄາ 800.000 ກີບ ຫລື ເປັນສະກຸນເງິນອື່ນໆທີ່ທຽບເທົ່າ, ຈຳນວນເງິນດັ່ງກ່າວຈະບໍ່ສາມາດສົ່ງຄືນໄດ້. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ ຫລື ເຊັກເງິນສົດ;
5. ການຍື່ນຊອງປະມູນຕ້ອງສົ່ງກ່ອນເວລາ 14:00 ໂມງ ຂອງວັນທີ 15 ກຸມພາ 2022 ທີ່ຫ້ອງປະຊຸມເບີ 2 ກະຊວງ ແລະ ຈະໄດ້ດຳເນີນການເປີດຊອງປະມູນ ໃນເວລາ 14:00 ໂມງ, ວັນທີ 15 ກຸມພາ 2022 ໂດຍຊ້ອງໜ້າຄະນະ

ກຳມະການປະມູນ ແລະ ຜູ້ເຂົ້າຮ່ວມການປະມູນ. ຊອງປະມູນໃດທີ່ສົ່ງຊ້າກ່ອນເວລາທີ່ກຳນົດໄວ້ແມ່ນຈະຖືກປະຕິເສດ ແລະ ຈະໄດ້ສົ່ງຄືນໂດຍບໍ່ມີການເປີດຊອງປະມູນ.

ຫົວໜ້າຫ້ອງການ
ຫົວໜ້າຄະນະກຳມະການປະມູນ

ປອ. ສຸດຖະໜອມ ອິນທະວົງ


ສະຖານທີ່:

ກົມການເງິນ, ພະແນກ ຊັບສິນ-ທີ່ດິນ, ກະຊວງ ໂຍທາທິການ ແລະ ຂົນສົ່ງ.
ຖະໜົນລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫລວງວຽງຈັນ, ສປປ ລາວ.
E-mail: southanom@mpwt.gov.la, Cc: anonrajsaphonh@gmail.com
ແລະ sayphone.th@mpwt.gov.la ໂທລະສັບ : 20-55 910 495 ຫລື 20-58 549 444